ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-12 ມິຖຸນາ 2022
ປີທີ 11
ສະບັບທີ 850

## ຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX




(ສພຊ) ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໃນວັນທີ 7-11 ມິຖຸນາ 2022 ຢູ່ໂຮງແຮມເມືອງແທັງ ໂດຍເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ມີຮອງປະທານຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານ-ຮອງປະທານກຳມາທິການສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ລັດຖະມົນຕີ, ຮອງລັດຖະມົນຕີ, ເລຂາທິການສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້ ເພື່ອສ້າງເງື່ອນໄຂໃຫ້ສະມາຊິກສະພາແຫ່ງຊາດ ໄດ້ຮັບຟັງການລາຍງານ, ການຊີ້ແຈງອະທິບາຍຂອງບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າອົງການ ກ່ຽວກັບເນື້ອໃນຕ່າງໆ, ພ້ອມທັງປຶກສາຫາລືແລກປ່ຽນຂໍ້ມູນເຊິ່ງກັນແລະກັນ ລະຫວ່າງສະມາຊິກສະພາແຫ່ງຊາດ ແລະ ຄະນະນຳຂອງກະຊວງ ທີ່ກ່ຽວຂ້ອງ ແນໃສ່ເຮັດໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບ ເຊິ່ງຈະເປັນຂໍ້ສະດວກ ໃຫ້ແກ່ການພິຈາລະນາຮັບຮອງເອກະສານຕ່າງໆ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີປະສິດທິຜົນ ແລະ ບັນລຸໄດ້ຕາມແຜນການທີ່ວາງໄວ້.

ກອງປະຊຸມຄັ້ງນີ້, ຈະໄດ້ສຸມໃສ່ພິຈາລະນາ ແລະ ສ້າງຄວາມເຂົ້າໃຈ ຕໍ່ບັນດາເນື້ອໃນຕ່າງໆ ເປັນຕົ້ນບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງລັດ

ອ່ານຕໍ່ໜ້າ 2

## ແຈ້ງການ
## ຄະນະເລຂາທິການສະພາແຫ່ງຊາດ

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງພະນັກງານ, ທະຫານ-ຕຳຫລວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າທົ່ວປະເທດ ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ຈະໄດ້ຈັດຂຶ້ນແຕ່ວັນທີ 13 ມິຖຸນາ ຫາ 8 ກໍລະກົດ 2022 ທີ່ຫໍສະພາແຫ່ງຊາດ, ນະຄອນຫລວງວຽງຈັນ.

ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ໃນຄັ້ງນີ້ ແມ່ນປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ແລະ ປະຕິບັດຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 137/ຄປຈ, ລົງວັນທີ 13 ພຶດສະພາ 2022.

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພຶດສະພາ



(ສພຊ) ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພຶດສະພາ 2022 ດຳເນີນລະຫວ່າງວັນທີ 1-2 ມິຖຸນາ 2022, ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ນະຄອນຫລວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາກະຊວງ, ອົງການກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍສຸມໃສ່ການ

ອ່ານຕໍ່ໜ້າ 2

## ມອບ-ຮັບ ເຄື່ອງອຸປະກອນໄອທີ ຈາກລັດຖະບານເຢຍລະມັນ



(ສພຊ) ວັນທີ 2 ມິຖຸນາ 2022 ທີ່ສະພາແຫ່ງຊາດ, ໄດ້ມີພິທີມອບ-ຮັບ ເຄື່ອງອຸປະກອນໄອທີ ຈາກລັດຖະບານເຢຍລະມັນ ໃຫ້ແກ່ແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ມອບໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຊິ່ງກ່າວມອບໂດຍທ່ານ ນາງ ຄິສຕີນາ ຊີແບັດ ຫົວໜ້າແຜນງານການປົກຄອງ ແລະ ກ່າວຮັບໂດຍທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ

ອ່ານຕໍ່ໜ້າ 2

## ການຮັບມືກັບສະພາບການປ່ຽນແປງ ເສດຖະກິດມະຫາພາກ ແລະ ການເງິນ-ເງິນຕາ



(ສພຊ) ໃນລະຫວ່າງວັນທີ 4-5 ມິຖຸນາຜ່ານມາ, ທີ່ເມືອງວັງວຽງ ແຂວງວຽງຈັນ, ໄດ້ຈັດກອງປະຊຸມສຳມະນາການຮັບມືກັບສະພາບການປ່ຽນແປງເສດຖະກິດມະຫາພາກ ແລະ ການເງິນ-ເງິນຕາ ແລະ ການກວດແກ້ປຶ້ມຄູ່ມື ໃນຂົງເຂດກຳມາທິການແຜນການ, ການເງິນ ແລະ ການກວດສອບ ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຕາງໜ້າສູນກາງສະຫະພັນແມ່ຍິງລາວ, ຕາງໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ຊ່ຽວຊານຕ່າງປະເທດ (PCASIA), ວິທະຍາກອນຊ່ຽວຊານມູນນິທິອາຊີ (TAF) ແລະ ພະນັກງານລັດຖະກອນທີ່ເປັນເສນາທິການໃຫ້ແກ່ກຳມາທິການແຜນການ, ການເງິນ ແລະ ການກວດສອບ.

ອ່ານຕໍ່ໜ້າ 2


ໜ້າ 4

ໜ້າ 7


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

## ຍົກສູງ...

ຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍ ໃນຂົງເຂດສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19.

ສຳລັບວຽກງານກົດໝາຍ ແລະ ອົງການໄອຍະການປະຊາຊົນ ຈະໄດ້ສຸມໃສ່ພິຈາລະນາ ແລະ ສ້າງຄວາມເຂົ້າໃຈ ຕໍ່ບົດລາຍງານຜົນການທາບທາມກົດໝາຍ ຈຳນວນ 9 ສະບັບ ທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນ ຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ບົດລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ), ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (ສະບັບປັບປຸງ), ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ), ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່) ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ.

ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ເນັ້ນໃຫ້ສະມາຊິກສະພາແຫ່ງຊາດ, ຄະນະຮັບຜິດຊອບເນື້ອໃນ, ຮ່າງກົດໝາຍ ສຸມສະຕິປັນຍາເຂົ້າໃນການປະກອບຄວາມຄຳຄິດຄຳເຫັນ, ຮ່ວມກັນຄົ້ນຄວ້າຊອກຫາວິທີການແກ້ໄຂບັນຫາຄວາມຫຍຸ້ງຍາກທີ່ເກີດຂຶ້ນ ໃຫ້ມີຄວາມເປັນເອກະພາບ ແລະ ພ້ອມກັນຈັດຕັ້ງປະຕິບັດ; ການຄົ້ນຄວ້າປະກອບຄຳເຫັນໃຫ້ຮັບປະກັນສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສອດຄ່ອງກັບສິດ ແລະ ໜ້າທີ່ ຂອງສະມາຊິກສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ, ສອດຄ່ອງກັບສະພາບຄວາມເປັນຈິງ ຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່ ແລະ ສາມາດເຊື່ອມໂຍງທາງດ້ານເສດຖະກິດກັບພາກພື້ນ ແລະ ສາກົນ.

(ນາງ ໄຊໂສພາພອນ ມິ່ງມຸງຄຸນ)

## ກອງປະຊຸມ...

ກວດກາບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາຕົກລົງຢູ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX, ການພິຈາລະນາຕົກລົງວຽກງານຈຳນວນໜຶ່ງຕາມການສະເໜີຂອງລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວໄຂກອງປະຊຸມວ່າ: ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມະຕິວ່າດ້ວຍການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນພຶດສະພາ 2022 ໄດ້ໄຂຂຶ້ນໃນທ່າມກາງບັນຍາກາດ ທີ່ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ກຳລັງສຸມໃສ່ກະກຽມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ດ້ວຍຄວາມຫ້າວຫັນ ແລະ ເປັນຂະບວນຟົດຟື້ນ; ບັນດາກົງຈັກເສນາທິການຂອງສະພາແຫ່ງຊາດ ໄດ້ປະສານສົມທົບກັບບັນດາກະຊວງ, ອົງການ ຄົ້ນຄວ້າ, ຮຽບຮຽງເນື້ອໃນຂອງບັນດາຮ່າງບົດລາຍງານ, ຮ່າງກົດໝາຍ ແລະ ເອກະສານຕ່າງໆ ໃຫ້ມີຄຸນນະພາບ. ພ້ອມກັນນັ້ນ, ກົງຈັກເສນາທິການຈຳນວນໜຶ່ງ ກໍໄດ້ລົງເຄື່ອນໄຫວເກັບກຳຂໍ້ມູນ, ລະດົມຄວາມຄິດເຫັນຈາກບັນດາອົງການຈັດຕັ້ງ ທັງພາກລັດ, ພາກເອກະຊົນ ກໍຄືປະຊາຊົນບັນດາເຜົ່າ ເພື່ອເປັນຂໍ້ມູນໃນການກະກຽມດ້ານເນື້ອໃນກອງປະຊຸມໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ.

ໃນວັນທີ 13 ມິຖຸນາ- 8 ກໍລະກົດ 2022 ນີ້ ສະພາແຫ່ງຊາດ ກໍຈະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ສະນັ້ນ, ການດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນເດືອນພຶດສະພາ 2022 ນີ້ ຄະນະປະຈຳສະພາແຫ່ງຊາດ ກໍຈະໄດ້ສຸມໃສ່ຮັບຟັງລາຍງານການກະກຽມບັນດາເອກະສານຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເປັນຕົ້ນ ບົດລາຍງານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ; ການກະກຽມບັນດາຮ່າງກົດໝາຍ ແລະ ບົດລາຍງານຕ່າງໆຂອງລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ. ນອກຈາກເນື້ອໃນດັ່ງກ່າວ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຈະໄດ້ພິຈາລະນາໜັງສືສະເໜີຂອງລັດຖະບານ ກ່ຽວກັບການພັດທະນາໂຄງການລົງທຶນຈຳນວນໜຶ່ງ, ການພິຈາລະນາບົດລາຍງານຂົງເຂດວຽກງານຂອງກຳມາທິການການຕ່າງປະເທດ, ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກຳມາທິການວັດທະນະທຳ-ສັງຄົມ ແລະ ເອກະສານອື່ນຈຳນວນໜຶ່ງ.

ບັນດາເນື້ອໃນທີ່ນຳມາພິຈາລະນາຕົກລົງ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດເທື່ອນີ້ ມີຄວາມສຳຄັນຫລາຍ ຕໍ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງເປັນໜ້າທີ່ການເມືອງຂອງສະພາແຫ່ງຊາດ; ສະນັ້ນ, ຈຶ່ງສະເໜີມາຍັງບັນດາທ່ານຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ຈົ່ງໄດ້ສຸມເຫື່ອແຮງ, ສະຕິປັນຍາ ເຂົ້າໃນການປຶກສາຫາລື, ຄົ້ນຄວ້າປະກອບຄຳເຫັນ ໃສ່ວຽກງານສຳຄັນຂອງຊາດ ທີ່ນຳມາພິຈາລະນາຢູ່ກອງປະຊຸມຄັ້ງນີ້ ເພື່ອເຮັດໃຫ້ການຕົກລົງຂອງກອງປະຊຸມ ມີຄວາມເປັນເອກະພາບ, ສາມາດຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າ.

## ມອບ-ຮັບ...

ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍ ເຊິ່ງເຄື່ອງທີ່ນຳມາມອບໃນຄັ້ງນີ້ ປະກອບມີ: ມີຄອມພິວເຕີ, ສະມາດບອດ, ໂປຣເຈັກເຕີ ແລະ ແທັບເລັດຈຳນວນໜຶ່ງ.

(ນາງ ສຸພາວັນ ຫອມສະນິດ)



## ການຮັບມື...

ເນື້ອໃນຂອງກອງປະຊຸມຄັ້ງນີ້, ປະກອບມີການຮັບມືກັບສະພາບການປ່ຽນແປງເສດຖະກິດມະຫາພາກ ແລະ ການເງິນ-ເງິນຕາ; ການຕິດຕາມກວດກາການສ້າງແຜນງົບປະມານ; ການຕິດຕາມກວດກາການຄຸ້ມຄອງໂຄງການລົງທຶນຂອງລັດຂະໜາດໃຫຍ່; ການຕິດຕາມກວດກາການກວດສອບ ແລະ ເຕັກນິກການຮັບຟັງຄຳຄິດຄຳເຫັນສາທາລະນະ. ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການສະເໜີບົດການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຈາກທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ; ຮັບຟັງການລາຍງານຈາກທ່ານ ສົມຫວັງ ກ່ຽວກັບບົດຮຽນສາກົນການຮັບມື ແລະ ການແກ້ໄຂຄວາມບໍ່ມີສະຖຽນລະພາບດ້ານເສດຖະກິດມະຫາພາກ, ການເງິນ ແລະ ເງິນຕາ; ສະເໜີບົດ ສະພາບເສດຖະກິດມະຫາພາກປັດຈຸບັນ ແລະ ຄວາມສ່ຽງ ໄລຍະສັ້ນ ຈາກທ່ານ ນາງ ຄຳເນີງ ບັນນະລາດ ຕາງໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ແລະ ລາຍງານແຜນການຄົ້ນຄວ້າ, ການຄົ້ນຄວ້າການສ້າງປຶ້ມຄູ່ມື ແລະ ປຶ້ມປະທານານຸກົມຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກໂຄງການມູນນິທິເອເຊຍ (TAF).

(ນາງ ກຸກກິກ ບຸດດາໄຊ)

# ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

❑ *ໃນປີ 2022 ນີ້, ສປປລາວ ກໍຄືກະຊວງກະສິກຳ ແລະ ປ່າໄມ້ ມີຄາດໝາຍສູ້ຊົນຜະລິດເຂົ້າລວມປະກອບມີ: ເຂົ້ານາແຊງ, ເຂົ້ານາປີ ແລະ ເຂົ້າໄຮ່ ໃຫ້ໄດ້ 3.701.300 ໂຕນ. ໃນນັ້ນ, ແຜນການຜະລິດເຂົ້ານາປີ 755.250 ເຮັກຕາ, ຄາດຄະເນຜົນຜະລິດ 3,1 ລ້ານໂຕນ ແລະ ແຜນການການຜະລິດພືດສະບຽງອາຫານ ແລະ ຜະລິດພືດສິນຄ້າ ເພື່ອບໍລິໂພກພາຍໃນ, ປ້ອນໂຮງງານອຸດສະຫະກຳປຸງແຕ່ງ ແລະ ສົ່ງອອກຕ່າງປະເທດໃນເນື້ອທີ່653.920ເຮັກຕາ, ເນື້ອທີ່ເກັບກ່ຽວ646.520 ເຮັກຕາ ແລະ ຄາດຄະເນຜົນຜະລິດ 8.434.800 ໂຕນ.*

***ນສພ. ປະເທດລາວ 06/06/2022***

❑ *ນັບແຕ່ປີ 2020 ເປັນຕົ້ນມາ, ລັດຖະບານຍີ່ປຸ່ນ ໄດ້ໃຫ້ການຊ່ວຍເຫລືອລາວ ໃນການຕ້ານສະກັດກັ້ນ ແລະ ປ້ອງກັນການລະບາດຂອງພະຍາດໂຄວິດ-19 ເປັນຕົ້ນ: ວັກຊີນ, ອຸປະກອນການແພດ, ລົດຮັບ-ສົ່ງຄົນເຈັບ ແລະ ອື່ນໆ ເປັນມູນຄ່າຫລາຍກວ່າ 20 ລ້ານໂດລາ ສະເພາະລົດຮັບ-ສົ່ງຄົນເຈັບທີ່ມອບໃຫ້ທັງສອງຄັ້ງ ລວມທັງໝົດ 81 ຄັນ ເຊິ່ງກະຊວງສາທາລະນະສຸກມີແຜນຈະມອບໃຫ້ພະແນກສາທາລະນະສຸກນະຄອນຫລວງວຽງຈັນ, ຈຳປາສັກ, ສະຫວັນນະເຂດ, ຫລວງພະບາງ ແລະ ແຂວງອຸດົມໄຊ ເພື່ອມອບສົ່ງໃຫ້ບັນດາເມືອງທີ່ຢູ່ເຂດຫ່າງໄກສອກຫລີກເພື່ອຮັບໃຊ້ເຂົ້າໃນວຽກງານຕ່າງໆໃຫ້ເກີດປະສິດທິຜົນສູງສຸດ.*

***ນສພ. ວຽງຈັນໃໝ່ 07/06/2022***

❑ *ສະມາຄົມເຟີນີເຈີລາວ ກຽມຈັດງານວາງສະແດງເຄື່ອງເຮືອນລາວ ຄັ້ງທີ 5 ປະຈຳປີ 2022 ຂຶ້ນໃນວັນທີ 9-17 ກໍລະກົດ 2022 ທີ່ສູນການຄ້າລາວ-ໄອເຕັກ (ຕຶກເກົ່າ) ເພື່ອປະຕິບັດຕາມທິດນະໂຍບາຍ ໃນການສົ່ງເສີມການຜະລິດເຄື່ອງເຟີນີເຈີໄມ້ລາວ ແລະ ເປັນການໂຄສະນາເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ເຖິງຜະລິດຕະພັນເຟີນີເຈີໄມ້ລາວຫລາຍຂຶ້ນ ໃຫ້ຜູ້ຜະລິດສາມາດເຂົ້າຫາຕະຫລາດ ແລະ ຈຳໜ່າຍສິນຄ້າໄດ້ ທັງພາຍໃນ ແລະ ຕ່າງປະເທດ ກ້າວເຂົ້າສູ່ການສ້າງຕາໜ່າງການວາງສະແດງ-ຂາຍສິນຄ້າເຟີນີເຈີກັບພາກພື້ນ ແລະ ສາກົນໃນອະນາຄົດ ທັງເປັນການສົ່ງເສີມສັງຄົມນຳໃຊ້ເງິນກີບລາວໃຫ້ຫລາຍຂຶ້ນ ຊ່ວຍປະເທດຊາດໃຫ້ຜ່ານຜ່າວິກິດເສດຖະກິດ-ການເງິນ ທີ່ກຳລັງປະເຊີນຢູ່ປັດຈຸບັນ.*

***ນສພ. ວຽງຈັນໃໝ່ 07/06/2022***

# ແລກປ່ຽນບົດຮຽນລະຫວ່າງຄະນະສະມາຊິກ ສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສພຂ



(ສພຊ) ໃນລະຫວ່າງວັນທີ 30-31 ພຶດສະພາຜ່ານມາ, ທີ່ເມືອງວັງວຽງ ແຂວງວຽງຈັນ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນການເຄື່ອນໄຫວວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຕາງໜ້າຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ (ພາກເໜືອ), ຄະນະກົມ, ຄະນະພະແນກ, ແຂກຖືກເຊີນ ແລະ ພະນັກງານວິຊາການທັງໝົດເຂົ້າຮ່ວມ.

ທັງນີ້, ເພື່ອແລກປ່ຽນ, ຖອດຖອນບົດຮຽນເຊິ່ງກັນ ແລະ ກັນ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ໃນການປະສານສົມທົບ ແລະ ແກ້ໄຂວຽກງານຮ່ວມກັນຕາມພາລະບົດບາດ ໃຫ້ມີຄວາມເປັນເອກະພາບ ແລະ ຄຸນນະພາບທີ່ດີຂຶ້ນ ທັງເພື່ອຍົກສູງຄຸນນະພາບໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກອງປະຊຸມ ໄດ້ຮັບຟັງການສະເໜີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໂດຍທ່ານ ສຸບັນ ສະວະບຸດ ເປັນຜູ້ສະເໜີ; ບົດສະເໜີກ່ຽວກັບການເຄື່ອນໄຫວ ແລະ ການພົບປະປະຊາຊົນ ຂອງສະມາຊິກສະພາແຫ່ງຊາດ ໂດຍທ່ານ ຄຳສິງ ໄຊສົມແພງ ເປັນຜູ້ສະເໜີ; ບົດສະເໜີກ່ຽວກັບການພົວພັນປະສານງານ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໂດຍທ່ານ ວຽງແກ້ວ ວັນນະຈັກ ເປັນຜູ້ສະເໜີ; ຮັບຟັງບົດປະກອບຄຳເຫັນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 3 ແຂວງຫລວງນ້ຳທາ; ຮັບຟັງບົດປະກອບຄຳເຫັນກ່ຽວກັບຈັດຕັ້ງປະຕິບັດພາລະບົດບາດ ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງວັງວຽງ; ຈາກນັ້ນ, ຜູ້ແທນກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ, ແລກປ່ຽນຄຳຄິດເຫັນຢ່າງມີຈຸດສຸມດ້ວຍຄວາມຮັບຜິດຊອບສູງ.

ໂອກາດດັ່ງກ່າວ, ທ່ານ ສຸບັນ ສະວະບຸດ ໄດ້ມີຄຳເຫັນໂອ້ລົມເຊິ່ງທ່ານໄດ້ຍົກໃຫ້ເຫັນຜົນໄດ້ຮັບຂອງບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຮູ້, ຄວາມເຂົ້າໃຈ ແລະ ກຳໄດ້ບັນດາບົດຮຽນໃນການປະສານສົມທົບ, ແກ້ໄຂວຽກງານຮ່ວມກັນຕາມພາລະບົດບາດ ແລະ ແລກປ່ຽນບົດຮຽນລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່ທີ່ມີບົດຮຽນປະສົບການແຕກຕ່າງກັນ ໃຫ້ສາມາດນຳໄປໝູນໃຊ້ໃນວຽກງານຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນໄດ້; ໃຫ້ເຂົ້າໃຈຢ່າງເລິກເຊິ່ງຕໍ່ພາລະບົດບາດ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ສາມາດນຳໄປປັບປຸງແບບແຜນວິທີເຮັດວຽກຂອງຕົນໃຫ້ດີກວ່າເກົ່າ; ເຂົ້າໃນການຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບັນດາເນື້ອໃນກອງປະຊຸມຄັ້ງນີ້ ໃຫ້ແທດເໝາະກັບຄວາມເປັນຈິງ, ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ ແລະ ສະເໜີວິທີການແກ້ໄຂຢ່າງຈະແຈ້ງ ເພື່ອເປັນບົດຮຽນໃຫ້ແກ່ການແກ້ໄຂວຽກງານໃນຕໍ່ໜ້າ.

(ອານຸສອນ ພູມມີທອນ)



# ສະພາແຫ່ງຊາດ ໄດ້ຮັບລົດໄຟຟ້າ ແລະ ຊຸດໄຟເຍືອງທາງ



(ສພຊ) ວັນທີ 3 ມິຖຸນາ 2022, ທີ່ດ້ານໜ້າຕຶກຄະນະເລຂາທິການສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບ ເຄື່ອງຊ່ວຍເຫລືອ ເປັນຕົ້ນລົດໄຟຟ້າ ແລະ ຊຸດໄຟເຍືອງທາງ ພ້ອມດ້ວຍອຸປະກອນນຳໃຊ້ຈຳນວນໜຶ່ງ ຕາງໜ້າຈາກບໍລິສັດ ຮ່ວມທຶນລາວ-ຈີນ ທ່ານ ສຸນະເດດ ສຸກຈະເລີນ ຮອງຫົວໜ້າກົມແຜນການ ແລະ ການເງິນ ກະຊວງຊັບພະຍາກອນ, ທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ກ່າວມອບ ແລະ ກ່າວຮັບໂດຍທ່ານ ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ; ເຄື່ອງທີ່ນຳມາມອບໃນຄັ້ງນີ້ປະກອບມີ: ລົດເກັງໄຟຟ້າ ຍີ່ຫໍ້ BYD ຈຳນວນ 1 ຄັນ; ລົດເມໄຟຟ້າ ຍີ່ຫໍ້ BYD ຈຳນວນ 1 ຄັນ ແລະ ຊຸດໄຟເຍືອງທາງ.

(ອານຸສອນ ພູມມີທອນ)

# ສຳເລັດເຝິກອົບຮົມການນຳໃຊ້ເຄື່ອງສະມາດບອດ ໃຫ້ພະນັກງານໄອທີ ສພຊ ແລະ ສພຂ



(ສພຊ) ໃນລະຫວ່າງວັນທີ 4-5 ມິຖຸນາ 2022 ທີ່ສະພາແຫ່ງຊາດ (ຫລັງໃໝ່) ໄດ້ມີການເຝິກອົບຮົມການນຳໃຊ້ເຄື່ອງສະມາດບອດ (ViewSonic Viewboard) ໃຫ້ພະນັກງານໄອທີພາຍໃນສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) 18 ເຂດເລືອກຕັ້ງທົ່ວປະເທດ ໂດຍການເປັນປະທານຂອງທ່ານ ວິລະພົນ ສະຫວັດວົງ ຮອງຫົວໜ້າຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ.

ທັງນີ້, ກໍເພື່ອຍົກສູງການຫັນເປັນທັນສະໄໝໃນການນຳໃຊ້ອຸປະກອນສື່ສານໄອທີເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ເປັນຕົ້ນການຈັດກອງປະຊຸມ-ສຳມະນາດ້ວຍຮູບແບບທາງໄກ ໂດຍການນຳໃຊ້ລະບົບສະມາດບອດ (VIEWSONIC IFP6552-1B ແລະ VIEWSONICIFP6570); ພ້ອມທັງແນະນຳຂັ້ນຕອນວິທີການນຳໃຊ້ຕົວຈິງ, ການປະກອບ-ຕິດຕັ້ງ, ຄຸ້ມຄອງບຳລຸງຮັກສາອຸປະກອນເຄື່ອງສະມາດບອດ ໃຫ້ແກ່ພະນັກງານໄອທີພາຍໃນ ສພຊ ແລະ ສພຂ ໃນຂອບເຂດທົ່ວປະເທດ ໃຫ້ສາມາດຄຸ້ມຄອງ ແລະ ນຳໃຊ້ໄດ້ຍາວນານ.

ໃນພິທີ, ທ່ານ ວິລະພົນ ສະຫວັດວົງ ໄດ້ມີຄຳເຫັນກ່າວເປີດໃນຊຸດເຝິກອົບຮົມຄັ້ງນີ້ວ່າ: ບັນດາເນື້ອໃນທີ່ນຳມາເຝິກອົບຮົມໃນຄັ້ງນີ້ລ້ວນແຕ່ເປັນບົດຮຽນທີ່ສຳຄັນ ທີ່ຢາກໃຫ້ບັນດາທ່ານກຳແໜ້ນ ເພື່ອໃຫ້ສາມາດນຳໄປຈັດຕັ້ງປະຕິບັດ ແລະ ນຳໃຊ້ຕົວຈິງໄດ້. ສະນັ້ນ, ໃນນາມຕາງໜ້າໃຫ້ຄະນະເລຂາທິການສະພາແຫ່ງຊາດ ສະເໜີມາຍັງບັນດາທ່ານຄະນະຮັບຜິດຊອບກອງປະຊຸມ ແລະ ບັນດາທ່ານທີ່ເຂົ້າຮ່ວມເຝິກອົບຮົມຄັ້ງນີ້ ຈົ່ງໄດ້ນຳໃຊ້ເວລາ ເອົາໃຈໃສ່ຮັບຟັງ ແລະ ສຸມສະຕິປັນຍາເຂົ້າໃນການປະກອບຄຳຄິດເຫັນ ຕໍ່ບັນດາເນື້ອໃນທີ່ນຳມາສະເໜີ ເພື່ອແນໃສ່ຮັບປະກັນຄວາມເຂົ້າໃຈ ຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງຂອງວຽກງານຂອງ ສພຊ ແລະ ສພຂ ໃນໄລຍະໃໝ່.

ໃນການເຝິກອົບຮົມດັ່ງກ່າວ, ຜູ້ເຂົ້າຮ່ວມແມ່ນໄດ້ຮຽນຮູ້ກ່ຽວກັບຄວາມຮູ້ພື້ນຖານກ່ຽວກັບເຄື່ອງສະມາດບອດ (VIEWSONIC IFP6552-1B ແລະ VIEWSONIC IFP6570); ແນະນຳສ່ວນປະກອບຕ່າງໆຂອງອຸປະກອນ ແລະ ການຕິດຕັ້ງ-ປະກອບເຄື່ອງສະມາດບອດ; ພື້ນຖານກ່ຽວກັບການນຳໃຊ້ເຄື່ອງສະມາດບອດ; ການຕິດຕັ້ງບັນດາໂປຣແກຣມຕ່າງໆທີ່ຈຳເປັນ; ການນຳໃຊ້ເຄື່ອງສະມາດບອດເຂົ້າໃນການຈັດກອງປະຊຸມ-ສຳມານາ ດ້ວຍຮູບແບບທາງໄກ; ການບຳລຸງຮັກສາເຄື່ອງສະມາດບອດ; ພ້ອມນັ້ນ, ຍັງໄດ້ມີການແລກປ່ຽນສົນທະນາຖາມ-ຕອບ ແລະ ທົດລອງການນຳໃຊ້ຕົວຈິງຕື່ມອີກ.

ເຊິ່ງການເຝິກອົບຮົມຄັ້ງນີ້, ໄດ້ຮັບການສະໜັບສະໜູນງົບປະມານຈາກແຜນງານເຊກາ.

(ກົງທະນູຄຳ ພິພັດເສລີ)

## ເບີໂທສຸກເສີນ

❑ **ຕຳຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927

# ສພຂ ວຽງຈັນ ເຄື່ອນໄຫວວຽກງານຕ່າງໆ



(ສພຊ) ໃນຕອນບ່າຍ ວັນທີ 23 ພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ຈັດກອງປະຊຸມແນະນຳການທາບທາມປະກອບຄຳເຫັນໃສ່ຮ່າງກົດໝາຍຈຳນວນ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ, ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ຮ່າງກົດໝາຍວ່າດ້ວຍຈິດສິນ ໂດຍການເປັນປະທານຂອງທ່ານ ບຸນສອນ ເຜີດລາວັນ ປະທານ ສພຂ ວຽງຈັນ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແຂວງວຽງຈັນ, ປະທານ-ຮອງປະທານຄະນະກຳມະການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງອ້ອມຂ້າງແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫລອດຮອດພະນັກງານວິຊາການທີ່ກ່ຽວຂ້ອງພາຍໃນ ສພຂ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍຈຳນວນ 4 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

ກ່ອນໜ້ານີ້, ເມື່ອກາງເດືອນພຶດສະພາ 2022 ໄດ້ມີກອງປະຊຸມປະຈຳປີ 2021 ຂອງຄະນະເລຂາທິການ ສພຂ ວຽງຈັນ ທີ່ຫ້ອງປະຊຸມ ສພຂ ວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ຈັນທະຄອນ ສີອຳພອນ ຮອງປະທານ ສພຂ ວຽງຈັນ ທັງເປັນຜູ້ຊີ້ນຳວຽກງານຄະນະເລຂາທິການ ແລະ ທ່ານ ຄຳຫລ້າ ສີສຸວົງ ເລຂາທິການ ສພຂ; ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການ 3 ຂະແໜງການທີ່ຂຶ້ນກັບຄະນະເລຂາທິການສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ແຜນການປະຈຳປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ມີການຄົ້ນຄວ້າປຶກສາຫາລື ແລະ ປະກອບຄຳເຫັນຢ່າງກົງໄປກົງມາ ເພື່ອເຮັດໃຫ້ບົດສະຫຼຸບມີຄວາມຄົບຖ້ວນ ແລະ ສົມບູນຂຶ້ນຕື່ມ.

ໂອກາດດຽວກັນນີ້, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກທ່ານ ນາງ ຈັນທະຄອນ ສີອຳພອນ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບຜົນງານ 1 ປີ ທີ່ຄະນະເລຂາທິການຍາດໄດ້ຜົນງານຜ່ານມາ ທີ່ເຫັນວ່າພົ້ນເດັ່ນຫລາຍດ້ານ ໂດຍຍົກໃຫ້ເຫັນດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ພ້ອມທັງເນັ້ນໜັກໃຫ້ເອົາໃຈໃສ່ປັບປຸງການເປັນເສນາທິການໃຫ້ມີຄວາມເຂັ້ມແຂງ ເປັນຕົ້ນແມ່ນການເພີ່ມທະວີການສຶກສາອົບຮົມແນວຄິດໃຫ້ພະນັກງານພາຍໃນ ສພຂ ໂດຍຕິດພັນກັບການກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງແຕ່ລະຄະນະກຳມະການ, ຂະແໜງການ ການປະຕິບັດແບບແຜນວິທີເຮັດວຽກ ພ້ອມທັງຍົກສູງທາງດ້ານກົນໄກການປະສານງານລະຫວ່າງຄະນະເລຂາທິການກັບຄະນະກຳມະການ ພາຍໃນສະພາປະຊາຊົນແຂວງ ໃຫ້ມີຄວາມສອດຄ່ອງສະດວກທັນກັບສະພາບການເຄື່ອນໄຫວວຽກງານຕົວຈິງ.




# ການເຄື່ອນໄຫວວຽກງານຂອງ ສພຂ ອຸດົມໄຊ


ກອງປະຊຸມປະຈຳເດືອນພຶດສະພາ 2022

(ສພຊ) ກອງປະຊຸມປຶກສາຫາລືກັບ 4 ພາກສ່ວນກະກຽມທາບທາມຮ່າງກົດໝາຍ 4 ສະບັບ, ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 24 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ, ມີຮອງປະທານ ສພຂ, ສະມາຊິກສະພາແຫ່ງຊາດຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ຄະນະປະຈຳ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກ, ຄະນະຮັບຜິດຊອບ ແລະ ວິຊາການຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງແມ່ນເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍ 4 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ, ທ່ານ ຄຳມະນີ ໄຊດວງຕາ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສພຂ ໄດ້ຜ່ານແຈ້ງການ ແລະ ຄຳແນະນຳຂອງກຳມາທິການກົດໝາຍສະພາແຫ່ງຊາດ ຕໍ່ເປົ້າໝາຍ, ຮູບແບບ, ວິທີການຈັດຕັ້ງປະຕິບັດທາບທາມ, ກຳນົດເວລາ ແລະ ເນື້ອໃນຂອງການທາບທາມຕາມຄຳຖາມເຈາະຈົ້ມຄື: ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ມີ 5 ມາດຕາ ຄື: 13 16 24 28 40; ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ(ສ້າງໃໝ່)ມີ 7 ມາດຕາ ຄື: 2 10 12 42 50 53 ແລະ 54; ຮ່າງກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່) ມີ 5 ມາດຕາ ຄື: 2 20 28 42 61 ແລະ ຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ມີ 9 ມາດຕາ ຄື: 18 19 20 21 22 27 28 32.

ກອງປະຊຸມຜູ້ເຂົ້າຮ່ວມໄດ້ປຶກສາຫາລືຮ່ວມກັນ ແລະ ຕົກລົງເຫັນດີກຳນົດວັນ, ເວລາໃນການຈັດຕັ້ງທາບທາມຮ່າງກົດໝາຍ 4 ສະບັບດັ່ງກ່າວ ພ້ອມທັງຮັບປະກັນດ້ານຄຸນນະພາບ, ມີເນື້ອໃນທີ່ຄົບຖ້ວນ ແລະ ສົມບູນ, ທັນຕາມກຳນົດເວລາ ແລະ ສາມາດສະຫລຸບສັງລວມຄຳເຫັນຕ່າງໆ, ສົ່ງໃຫ້ກຳມາທິການກົດໝາຍ ສພຊ, ນຳໄປປະກອບຄຳຄິດເຫັນ, ຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້.

ໃນວັນຕໍ່ມາ, ທີ່ຫ້ອງປະຊຸມ ສພຂ ອຸດົມໄຊ, ຄະນະປະຈຳ ສພຂ ອຸດົມໄຊ ຍັງໄດ້ດຳເນີນກອງປະຊຸມປະຈຳເດືອນພຶດສະພາ 2022 ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ, ມີບັນດາທ່ານໃນຄະນະປະຈຳ ສພຂ ເຂົ້າຮ່ວມ.

ທ່ານ ນາງ ວັນສີ ພວງມະໄລ ກຳມະການປະຈຳ ສພຂ, ເລຂາທິການ ສພຂ ໄດ້ຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານປະຈຳເດືອນພຶດສະພາ ແລະ ວາງທິດທາງແຜນການປະຈຳເດືອນມິຖຸນາ 2022 ຂອງຄະນະປະຈຳ ສພຂ. ຈາກນັ້ນ, ກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫລຸບການເຄື່ອນໄຫວວຽກງານປະຈຳເດືອນດັ່ງກ່າວ ຢ່າງກົງໄປກົງມາ. ພ້ອມດຽວກັນນັ້ນ, ຍັງໄດ້ຄົ້ນຄວ້າ, ພິຈາລະນາຮັບຮອງເອົາແຜນການລົງທຶນຂອງລັດ ປະຈຳປີ 2022 ຂອງແຂວງອຸດົມໄຊ ຕາມໜັງສືສະເໜີຂອງທ່ານເຈົ້າແຂວງເລກທີ 413/ອຊ, ລົງວັນທີ 12 ພຶດສະພາ 2022, ຜ່ານຮ່າງແຜນດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II, ຜ່ານຮ່າງ ມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II, ໄດ້ຄົ້ນຄວ້າພິຈາລະນາຄຳຮ້ອງທຸກ ແລະ ທາງສຽງສັງຄົມອີກຈຳນວນໜຶ່ງ.

(ແສງພອນ ອິນນະລົງ)

# ສພຂ ບໍລິຄຳໄຊ ເຜີຍແຜ່ເອກະສານທີ່ສຳຄັນຂອງພັກ, ອົງການຈັດຕັ້ງມະຫາຊົນ



(ສພຊ) ໃນວັນທີ 25 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ຈັດຕັ້ງພິທີເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງສູນກາງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ໂດຍການເປັນປະທານຂອງ ສະຫາຍ ປອ. ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ, ປະທານ ສພຂ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຮັບຟັງ.

ໃນພິທີດັ່ງກ່າວ, ສະຫາຍ ປອ. ສຸວັນນີ ໄຊຊະນະ ໄດ້ເຜີຍແຜ່ເຊື່ອມຊຶມເອກະສານມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ຄັ້ງທີ 7 ສະໄໝທີ VII ເຊິ່ງໄດ້ຕີລາຄາສູງ ແລະ ຮັບຮອງເອົາຜົນສຳເລັດການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ສະໄໝທີ VII ຂອງ 3 ເດືອນຕົ້ນປີ 2022. ພ້ອມນີ້, ຍັງໄດ້ຮັບຟັງການເຜີຍແຜ່ເຊື່ອມຊຶມເອກະສານຈາກຄະນະພັກຮາກຖານສະພາປະຊາຊົນແຂວງ ເປັນຕົ້ນແຜນດຳເນີນງານເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍ, ຜົນສຳເລັດເນື້ອໃນກອງປະຊຸມວຽກງານໂຄສະນາອົບຮົມທົ່ວປະເທດ ປະຈຳປີ 2021 ພາຍໃຕ້ຄຳຂວັນ "ສ້າງການຫັນປ່ຽນຢ່າງແຂງແຮງ ວຽກງານໂຄສະນາອົບຮົມໄປສູ່ຄຸນນະພາບໃໝ່", ບົດໂອ້ລົມຂອງສະຫາຍ ປອ. ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນການພັກ, ຮອງປະທານປະເທດແຫ່ງ ສປປລາວ ຕໍ່ວຽກງານໂຄສະນາອົບຮົມທົ່ວປະເທດ ປະຈຳປີ 2021, ຜົນສຳເລັດຂອງກອງປະຊຸມວິສາມັນຄົບຄະນະບໍລິຫານສູນກາງສະຫະພັນແມ່ຍິງລາວ ສະໄໝທີ VIII.

(ນາງ ໂສລະຢ່າ ໄຊຍະວົງ)

# ປະທານ ສພຂ ສະຫວັນນະເຂດ ເຄື່ອນໄຫວຊຸກຍູ້ວຽກງານ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຢູ່ເມືອງນອງ



(ສພຊ) ໃນຕອນເຊົ້າ ວັນທີ 25 ພຶດສະພາ 2022 ທີ່ ສະໂມສອນຂອງເມືອງນອງ ແຂວງສະຫວັນນະເຂດ, ທ່ານ ກິງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ພ້ອມດ້ວຍບັນດາຮອງປະທານຄະນະກຳມະການ, ເລຂາທິການສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນອງ ໄດ້ເຄື່ອນໄຫວຊຸກຍູ້ວຽກງານ ກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໂດຍການຕ້ອນຮັບຂອງທ່ານ ລຳແກ້ວ ແສງໜູທອງ ເຈົ້າເມືອງງນອງ ພ້ອມດ້ວຍຄະນະ.

ທີ່ປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ເຊິ່ງເປັນບັນຫາໃຫຍ່ລະດັບຊາດ ເຊິ່ງໃນໄລຍະຜ່ານມາຄະນະພັກ, ຄະນະປົກຄອງເມືອງນອງ ໄດ້ເອົາໃຈໃສ່ສຸມທຸກກຳລັງແຮງ ເຂົ້າໃນແຕ່ລະໜ້າວຽກ ເພື່ອເຮັດໃຫ້ເມືອງນອງໄດ້ຫລຸດພົ້ນອອກຈາກເມືອງທີ່ທຸກຍາກ, ພະນັກງານສະມາຊິກພັກ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫລວດ ປະຊາຊົນໃນທົ່ວເມືອງນອງຮັບຮູ້ ພ້ອມທັງແນະນຳ, ມອບໝາຍໃຫ້ພາກສ່ວນຫ້ອງການນຳໄປຜັນຂະຫຍາຍເປັນທິດທາງຂອງຕົນແລ້ວນຳພາພໍ່ແມ່ປະຊາຊົນຈັດຕັ້ງປະຕິບັດຕົວຈິງ ປັດຈຸບັນເມືອງນອງໄດ້ຊຸກຍູ້ໃຫ້ປະຊາຊົນປູກພືດເພື່ອທົດແທນການນຳເຂົ້າສິນຄ້າ ເປັນຕົ້ນແມ່ນໃນປີ 2021 ທົ່ວເມືອງປູກເຂົ້າໄດ້ທັງໝົດ 5.555 ເຮັກຕາ, ສາມາດຜະລິດເຂົ້າເປືອກໄດ້ທັງໝົດ 9.413 ໂຕນ, ທຽບໃສ່ປີ 2020 ເພີ່ມຂຶ້ນ 21 ກວ່າໂຕນ ໃນເນື້ອທີ່ເກັບກ່ຽວ 4.515 ກວ່າເຮັກຕາ, ຜະລິດເຂົ້ານາປີໄດ້ 3.119 ກວ່າໂຕນ, ເພີ່ມຂຶ້ນ 3 ໂຕນ, ສະມັດຕະພາບສະເລ່ຍ 2,45 ໂຕນ/ເຮັກຕາ ໃນເນື້ອທີ່ນາທັງໝົດ 45,46 ເຮັກຕາ, ເຂົ້າໄຮ່ສວນ 6.185 ໂຕນ ໃນເນື້ອທີ່ 3.436 ເຮັກຕາ, ສະເລ່ຍໃສ່ພົນລະເມືອງທັງໝົດ 31.837ຄົນ, 295 ກິໂລຕໍ່ຄົນຕໍ່ປີ, ທົ່ວເມືອງມີເນື້ອທີ່ແຜນປູກທັງໝົດ 4.500 ເຮັກຕາ, ສາມາດປູກໄດ້ຕົວຈິງ 7.864 ກວ່າເຮັກຕາ, ບັນລຸຜົນຜະລິດໄດ້ 110.829 ກວ່າໂຕນ, ຍ້ອນປະຊາຊົນມີຄວາມຕື່ນຕົວໃນການປູກພືດເສດຖະກິດຫລາຍຂຶ້ນ ເປັນຕົ້ນ ປູກກ້ວຍ ແລະ ມັນຕົ້ນ, ການປູກພືດລະດູແລ້ງໃນປີ 2021 ມີແຜນປູກທັງໝົດ 2.000 ເຮັກຕາ, ປູກໄດ້ຕົວຈິງ 1.171 ເຮັກຕາ, ເກັບກ່ຽວຜົນຜະລິດໄດ້ 4.529 ກວ່າໂຕນ, ການປູກພືດໃນລະດູຝົນມີແຜນປູກ 2.500 ເຮັກຕາ, ປູກໄດ້ຕົວຈິງ 6.693 ເຮັກຕາ, ຜົນຜະລິດບັນລຸໄດ້ 106.600 ກວ່າໂຕນ, ການຜະລິດສິນຄ້າທີ່ສົ່ງອອກທົ່ວເມືອງມີສວນປູກພືດສິນຄ້າທັງໝົດ 6.544 ເຮັກຕາ, ຜົນຜະລິດ 106.128ໂຕນ ເປັນຕົ້ນແມ່ນກ້ວຍມີເນື້ອທີ່ 5.344 ເຮັກຕາ, ຜະລິດໄດ້ 64.128 ໂຕນ, ມູນຄ່າ 83 ຕື້ 360 ລ້ານກວ່າກີບ, ມັນຕົ້ນມີເນື້ອທີ່ປູກ 1.200 ເຮັກຕາ, 42.000ໂຕນ, ມູນຄ່າ 25 ຕື້ 200 ລ້ານກີບ. ດ້ານການແກ້ໄຂບັນຫາຢາເສບຕິດ ໄດ້ເກັບກຳເປົ້າໝາຍຄ້າຂາຍ ແລະ ເສບຢາເສບຕິດ ແລະ ໄດ້ນຳເອົາເອກະສານລົງເຜີຍແຜ່ໃຫ້ປະຊາຊົນໃນ 8 ກຸ່ມບ້ານສຳເລັດ, ໄດ້ລົງກວດນ້ຳຍ່ຽວພະນັກງານ ຕາມສຳນັກງານ 12 ຫ້ອງການ ກວດທັງໝົດ 79 ຄົນ, ພົບສານເສບຕິດ 2 ຄົນ, ທົ່ວເມືອງໄດ້ປະກາດສ້າງບ້ານປອດຢາເສບຕິດ 46 ບ້ານ ຮັບຮອງແລ້ວ 32 ບ້ານ, ນອກນັ້ນກໍ່ຍັງມີບັນຫາວຽກການເກັບພາສີທີ່ດິນ ໂດຍສະເພາະດິນທີ່ໃຫ້ບໍລິສັດເຂົ້າມາສຳປະທານ.

ໃນໂອກາດນີ້, ໄດ້ຮັບຟັງຄຳໂອ້ລົມຂອງປະທານ ສພຂ ສະຫວັນນະນະເຂດ ຕໍ່ກັບດ້ານໜ້າວຽກທີ່ຍັງຄົງຄ້າງ ເຊິ່ງທ່ານມີຄຳເຫັນວ່າ ທຸກຄົນຄວນເປັນເຈົ້າການຊຸກຍູ້ສົ່ງເສີມພ້ອມກັບຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ.

ພາຍຫລັງກອງປະຊຸມຄັ້ງນີ້ສຳເລັດ, ການນຳຂອງແຂວງຈະໄດ້ເຄື່ອນໄຫວກວດກາຄືນໃໝ່ເພື່ອຕິດຕາມຄວາມຄືບໜ້າຂອງແຕ່ລະໜ້າວຽກຕື່ມອີກ.

(ນັກຂ່າວ ສພຂ ສະຫວັນນະເຂດ)

# ສພຂ ໄຊຍະບູລີ ທາບທາມຮ່າງ ກົດໝາຍ 4 ສະບັບ



(ສພຊ) ໃນວັນທີ 26 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງໄຊຍະບູລີ ໄດ້ເປີດກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່) ແລະ ຮ່າງກົດ ໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ; ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການ, ກົມກອງ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງລາຍງານຮ່າງກົດໝາຍ 4 ສະບັບ. ພ້ອມດຽວກັນນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ກໍໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ 4 ສະບັບ ຢ່າງກົງໄປກົງມາ ໂດຍໄດ້ຍົກໃຫ້ເຫັນດ້ານເນື້ອໃນຈິດໃຈຂອງຮ່າງກົດໝາຍດັ່ງກ່າວ ເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍ 4 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

(ອິນທີ ຂຽວສີຟ້າ)



# ພິທີເຊັນບົດບັນທຶກການປະສານງານລະຫວ່າງ ຄສຜງ ສພຂ ບໍ່ແກ້ວ ແລະ ພະແນກຂົງເຂດເສດຖະກິດ



(ສພຊ) ວັນທີ 26 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ໄດ້ຈັດພິທີເຊັນບົດບັນທຶກການປະສານງານລະຫວ່າງຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ (ຄສຜງ) ສພຂ ກັບ 6 ພະແນກຂົງເຂດເສດຖະກິດແຂວງ ພາຍໃຕ້ການເຂົ້າຮ່ວມຂອງທ່ານ ຈອມສີ ລັດຕະນະປັນ ປະທານ ສພຂ; ມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າພະແນກການທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານວິຊາການຂອງຄະນະກຳການດັ່ງກ່າວເຂົ້າຮ່ວມເປັນສັກຂີພິຍານ.

ພິທີດັ່ງກ່າວ ຄະນະຮັບຜິດຊອບໄດ້ຜ່ານມະຕິຂອງຄະນະປະຈຳວ່າດ້ວຍການອະນຸມັດໃຫ້ ຄສຜງ ດຳເນີນພິທີເຊັນບົດບັນທຶກການປະສານງານ ລະຫວ່າງ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ຄສຜງ ກັບ 6 ພະແນກການຂົງເຂດເສດຖະກິດ ແລະ ຜ່ານຮ່າງບົດບັນທຶກການປະສານງານລະຫວ່າງ ຄສຜງ ກັບ 6 ພະແນກຂົງເຂດເສດຖະກິດແຂວງ. ຈາກນັ້ນ, ໄດ້ເຂົ້າສູ່ພິທີເຊັ່ນບົດບັນທຶກໂດຍຕາງໜ້າໃຫ້ແກ່ ສພຂ ກໍຄື ຄສຜງ ແມ່ນທ່ານ ນາງ ບົວຄົມ ຂານສຸວົງ ປະທານ ຄສຜງ ໄດ້ລົງນາມຮ່ວມກັບຜູ້ຕາງໜ້າຈາກ 6 ພະແນກການຂົງເຂດເສດຖະກິດແຂວງ ເຊິ່ງແມ່ນຫົວໜ້າຂອງແຕ່ລະພະແນກການຄື: ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກກະສິກຳ ແລະ ປ່າໄມ້, ພະແນກແຜນການ ແລະ ການລົງທຶນ ແລະ ພະແນກໂຍທິການ ແລະ ແລະ ຂົນສົ່ງ.

ໃນຕອນທ້າຍພິທີ, ຍັງໄດ້ຮັບຟັງຄຳໂອ້ລົມຈາກປະທານ ສພຂ ແລະ ພິທີດັ່ງກ່າວແມ່ນສຳເລັດຕາມຄາດໝາຍ.

(ນາງ ຂັນຖະໜອມ ແກ້ວມະນີ)

# ຄສຊ ເຂດ 14 ແຂວງສາລະວັນ ສະຫລຸບ ການເຄື່ອນໄຫວປະຈຳເດືອນພຶດສະພາ



(ສພຊ) ໃນຕອນເຊົ້າ ວັນທີ 25 ພຶດສະພານີ້ ຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງ 14 ແຂວງສາລະວັນ ໄດ້ສະຫລຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳເດືອນພຶດສະພາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ພາຍໃຕ້ການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານ ຄສຊ ປະຈຳເຂດເລືອກຕັ້ງທັງເປັນປະທານ ສພຂ, ມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ປະຈຳຢູ່ແຂວງເຂົ້າຮ່ວມເຊິ່ງໜ້າ ແລະ ສສຊ ປະຈຳຢູ່ສູນກາງເຂົ້າຮ່ວມດ້ວຍກອງປະຊຸມທາງໄກ.

ກອງປະຊຸມຄັ້ງນີ້, ໄດ້ຜ່ານຮ່າງບົດສະຫລຸບປະຈຳເດືອນພຶດສະພາ ແລະ ແຜນການປະຈຳເດືອນມິຖຸນາ ເຊິ່ງໃນໄລຍະຜ່ານມາ ກໍໄດ້ປະຕິບັດສິດ ແລະ ໜ້າທີ່ດ້ານນິຕິບັນຍັດ ເປັນເຈົ້າການຈັດທາບທາມກົດໝາຍ ຈຳນວນ 8 ສະບັບ; ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໄດ້ຍົກສູງພາລະບົດບາດໃນການຄົ້ນຄວ້າພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ໃນການຕົກລົງບັນຫາສຳຄັນຕ່າງໆ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ, ນິຕິກຳໃຕ້ກົດໝາຍ; ປະສານສົມທົບກັບສະພາປະຊາຊົນແຂວງ ໃນການເຮັດໜ້າທີ່ຊຸກຍູ້ ແລະ ຕິດຕາມກວດກາບັນດາອຳນາດລັດຂັ້ນທ້ອງຖິ່ນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໂດຍສະເພາະການຈັດຕັ້ງປະຕິບັດວາລະແຫ່ງຊາດ ດ້ວຍຄວາມຮັບຜິດຊອບສູງ. ຈາກນັ້ນ, ສສຊ ປະຈຳເຂດເລືອກຕັ້ງ 14 ໄດ້ສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງບົດສະຫລຸບ ເພື່ອເຮັດໃຫ້ບົດສະຫລຸບມີຄວາມຄົບຖ້ວນສົມບູນ, ສ້າງຄວາມເປັນເອກະພາບ ແລະ ຮັບປະກັນການເຄື່ອນໄຫວງານໃນຕໍ່ໜ້າມີຜົນສຳເລັດ. ພ້ອມນັ້ນໄດ້ປຶກສາຫາລື ແລະ ເປັນເອກະພາບບັນຫາສຳຄັນອີກຈຳນວນໜຶ່ງ ເຊັ່ນ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການກະກຽມຂໍ້ມູນເຂົ້າຮ່ວມກອງປະຊຸມສາມັນ 3 ຂອງສະພາແຫ່ງຊາດ ຊຸດທີ IX.

(ນາງ ຄັດສອນ ຮຸ່ງສະຫວ່າງ)



## ສຸກສະບາຍຫາຍໂຣຄາ

# 5 ສັນຍານເຕືອນອາການແພ້ຢາສະຜົມ

# ໂດຍ: ສາວແອ່ນ



ໃນປັດຈຸບັນນີ້ ຢາສະຜົມມີຫລາກຫລາຍຍີ່ຫໍ້ ແລະ ຫລາກຫລາຍສູດ ຈົນເລືອກຊື້ເລືອກໃຊ້ບໍ່ຖືກ ແຕ່ເຊື່ອແນ່ວ່າ ຫລາຍທ່ານຈະເລືອກໃຊ້ຜະລິດຕະພັນທີ່ມີກິ່ນຫອມຕາມໃຈມັກ ແຕ່ບາງຄັ້ງການໃຊ້ຕາມທີ່ໂຕເອງມັກອາດຈະພາໃຫ້ເກີດມີອາການຄັນ ຫລື ແສບໜັງຫົວ ບາງເທື່ອກໍມີສິວຂຶ້ນຕາມໜັງຫົວ... ຖ້າທ່ານມີອາການເຫລົ່ານີ້ ລອງມາສັງເກດນຳກັນເບິ່ງວ່າທ່ານມີອາການແພ້ຢາສະຜົມຫລືບໍ່ ແລະ ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມີ 5 ສັນຍານເຕືອນກ່ຽວກັບອາການແພ້ຢາສະຜົມ ມານຳສະເໜີໃຫ້ແກ່ບັນດາທ່ານໄດ້ຮັບຮູ້ ແລະ ສັງເກດໄປນຳກັນ:

1. ແສບໜັງຫົວ ແລະ ມີຮອຍແດງ.

ຫາກທ່ານໃດ ທີ່ໃຊ້ຢາສະຜົມແລ້ວຮູ້ສຶກແສບໆຄັນໆໜັງຫົວຕັ້ງແຕ່ເທື່ອທຳອິດທີ່ໃຊ້ ໂດຍທີ່ບໍ່ມີບາດແຜໃນໜັງຫົວ ອາການແບບນີ້ເປັນອາການແພ້ຢາສະຜົມ ເພາະໃນຢາສະຜົມອາດຈະມີສານເຄມີບາງຊະນິດ ທີ່ເຮັດໃຫ້ໜັງຫົວເກີດອາການຄັນຈົນອັກເສບ ແລະ ຈະກາຍເປັນຮອຍແດງຕາມໜັງຫົວບໍລິເວນອ້ອມຮອບ ແລະ ບາງຄົນອາດຈະມີອາການແສບນຳອີກ.

2. ມີຕຸ່ມຂຶ້ນ ແລະ ມີອາການຄັນ

ນອກຈາກບໍລິເວນໜັງຫົວແລ້ວ ບ່ອນໃດຖືກຢາສະຜົມກໍຈະມີຕຸ່ມຂຶ້ນ ຫລື ຄັນ ເກີດຈາກຢາສະຜົມບາງຊະນິດມີສານ SLS (ສານຫລຸດຄວາມຕຶງຂອງຜິວ) ແລະ ພາລາເບນ (ສານກັນບູດໃນເຄື່ອງສຳອາງ) ທີ່ໄປທຳລາຍຄວາມຊຸ່ມຊື່ນ ແລະ ເຮັດໃຫ້ເກີດອາການຄັນໃນບໍລິເວນທີ່ຖືກຢາສະຜົມ.

3. ມີສິວສ້ຽນ ແລະ ສິວເກືອ

ຢາສະຜົມທີ່ເຮົາໃຊ້ນັ້ນ ອາດເປັນສາເຫດທີ່ແທ້ຈິງຂອງການມີສິວ ເຊິ່ງມັກຈະເກີດບໍລິເວນໜ້າຜາກ, ຕີນຜົມ ໂດຍສະເພາະສິວເກືອ ແລະ ສິວສ້ຽນ ເນື່ອງຈາກໃນຢາສະຜົມມີສານຊິລິໂຄນປະສົມຢູ່ ສານນີ້ເຮັດໜ້າທີ່ເອືອບຜົມໃຫ້ມີຄວາມນຸ່ມ ແລະ ມື່ນພ້ອມນັ້ນ, ສານດັ່ງກ່າວ ກໍເປັນສາເຫດຫລັກຂອງການເປັນສິວສ້ຽນ ເຊິ່ງເກີດຂຶ້ນໄດ້ຈາກສານຊິລິໂຄນໃນຢາສະຜົມຕົກຄ້າງ ແລະ ສະສົມຕາມຮູຂຸມຂົນ ຈົນເກີດເປັນອາການແພ້ຢາສະຜົມ ແລະ ເປັນສິວນັ້ນເອງ.

4. ມີຂີ້ຮັງແຄ

ເປັນອີກໜຶ່ງສັນຍານ ທີ່ເຫັນໄດ້ຢ່າງຈະແຈ້ງ ນອກຈາກມີສະເກັດຂາວໆເປັນຝຸຍຕົກລົງມາແລ້ວ ຍັງມີອາການຄັນນຳອີກ ເຊິ່ງອາດເກີດໄດ້ຈາກຫລາຍສາເຫດ ບາງເທື່ອອາດຈະເປັນເພາະໜັງຫົວແຫ້ງ ແລະ ອັກເສບລວມເຖິງເຊື້ອລາຕ່າງໆ ດັ່ງນັ້ນ, ຈຶ່ງຕ້ອງໝັ່ນສັງເກດເວລາທີ່ປ່ຽນໃຊ້ຢາສະຜົມໃໝ່ ວ່າມີລັງແຄເກີດຂຶ້ນ ຫລື ບໍ່ ຖ້າມີໃຫ້ຢຸດໃຊ້ທັນທີ.

5. ຜົມຫລົ່ນ

ຢາສະຜົມ ເປັນໜຶ່ງສາເຫດທີ່ເຮັດໃຫ້ຜົມຫລົ່ນ ອັນເກີດຈາກສານຊິລິໂຄນຕົກຄ້າງຢູ່ໃນກົກຜົມ ເຊິ່ງຈະໄປອັດຕັນ ແລະ ເຮັດໃຫ້ຜົມຫລົ່ນ; ນອກນັ້ນ, ຜົມຫລົ່ນຍັງເກີດມາຈາກຫລາຍສາເຫດເຊັ່ນ: ແພ້ອາຫານ, ນອນເດິກ ຫລື ມີພຶດຕິກຳທີ່ສົ່ງຜົນບໍ່ດີຕໍ່ເສັ້ນຜົມ ເປັນຕົ້ນແມ່ນການສະຜົມກາງຄືນແລ້ວບໍ່ເຮັດໃຫ້ແຫ້ງ ມັດຜົມແໜ້ນຈົນເກີນໄປເປັນປະຈຳ.

## ສາລາກະວີ

# ວອນຢ່າທຳລາວ

# ໂດຍ: ດ.ສະຫວັນ

✳ ຄຸນຄ່າຂອງຜືດໄມ້ ມີມາກຫລວງຫລາຍ
ຫາກທຳລາຍຕັດຮອນ ປ່າດົງຄອນໄມ້
ເຮັດໃຫ້ໂລກາຮ້ອນ ສັດຕາຍປະປ່າ
ວາຕະໄພເດືອດຮ້ອນ ໄພແລ້ງທົ່ວກັນ

✳ ມັນຫາກເປັນເລື່ອງເສົ້າ ສັດປ່າສູນຫາຍ
ພາກັນໜີປົບຕາຍ ເພື່ອຄົງໂຕໄດ້
ໜີໄກຄັນທະນູໜ້າ ໝາພານຈອບໄລ່
ອາວຸດປືນໃຫຍ່ນ້ອຍ ຄອຍຂ້າຈອບຍິງ

✳ ບີກະທິງວ່ານັ້ນ ມີຄ່າແພງຫລາຍ
ຊ່ວຍຊາຍຊູກຳລັງ ຊ່າຂານລືກ້ອງ
ເອົາປະສົມນອງເຫລົ້າ ມີພະລັງກິນດື່ມ
ລືມຮອດຄວາມເດືອດຮ້ອນ ແຮງກ້າຄຶກຄະນອງ ວ່າຊັ້ນ!

✳ ບໍ່ຄຳນຶງບ່ອນເບື້ອງ ຜົນເຫດຊີຕາມມາ
ພຽງແຕ່ຊອກຫາທາງ ມັ່ງມີລວຍລົ້ນ
ບໍ່ສົນນຳໄພຮ້າຍ ຈະທຳລາຍອັນໃຫຍ່
ຍ້ອນວ່າຕັດຜືດໄມ້ ເຫັນໄດ້ແກ່ເງິນ ວ່ານາ!

✳ ສັດປ່າຕາຍນອກນ້ອຍ ເພາະຄົນລ່າຍິງເອົາ
ມາປຸງເປັນອາຫານ ແຊບນົວດີແທ້
ແຖມເອົາໄປຂາຍຄ້າ ແລກເງິນຕາໃຊ້ຈ່າຍ
ສັດກໍຕາຍຮາບກ້ຽງ ສຽງຮ້ອງກໍບໍ່ມີ ສາແລ້ວ!

✳ ເຮົາຄວນອານຸລັກໄວ້ ໄມ້ໃຫຍ່ດົງໜາ
ຢ່າທຳລາຍສັດສາ ປ່າພົງພືນກວ້າງ
ຢ່າລ່ວງເກີນແດນກ້ຳ ຊຽນຄຳກອນວອນສັ່ງ
ບໍ່ໄດ້ອີ່ງອວດອ້າງ ວາງກ້ານໃສໃຜ ທ່ານເອີຍ!



## ທັກທາຍ ລະບາຍ

# ສາວຈົ້ມ

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິ່ງພິທີການ)**

✳ ***"ຈານເຈາະ"*** *ຜູກຕັ້ງຄໍລຳທັກທາຍລະບາຍໃຈ ແລະ ຮູ້ກັບຢ່າງແພ່ຫລາຍໃນນາມປາກກາ* ***"ຜູ້ແທນເກົ່າ"*** *ໄດ້ນຳເອົາປຶ້ມຜົນງານໂຮມເລື່ອງສັ້ນຄັດຈ້ອນຍ້ອນຫລັງ* ***20 ປີໃນຊື່ "ລາຕີລ້ານແສງ"*** *ຈຳນວນ 2.500 ຫົວ ອອກແຈກຢາຍໃຫ້ນັກອ່ານທົ່ວສັງຄົມໄດ້ຊື່ນຊົມຈັບຕ້ອງ ແລະ ນຳໄປເປັນອາຫານບຳລຸງສະໝອງ ຊໍ່ໃຫ້ພົງພີ່ນ້ອງ ຈັບອ່ານຕາມອັດທະຍາໄສ ເນື້ອໃນທັງຄຳສັບ ສື່ສານໜັກແໜ້ນ ຊໍ່ໃຫ້ແຟນຄໍລຳໄດ້ ສະບາຍໃຈກັບການອ່ານ ບົດຈານເຈາະຂຽນອອກໃຫ້ ເຮົາໄດ້ອ່ານທົ່ວເຖິງ* ***ຄັກແດ!***

✳ ***ຜ່ານພົ້ນໄປ*** *ສຳລັບວັນ* ***ປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ*** *ບັນຍາພົດຟື້ນ ຄືນປ່າທົ່ວສັງຄົມ ປຸກລະດົມສາມັກຄີ ປູກແນວພັນໄມ້ ປູກໃສ່ທໍ່ລະນີພົ້ນ ຄືນຄວາມຊຸ່ມຊື່ນ ອີກບໍ່ນານຄົງຊິພຶກຟື້ນ ຜືນພະນາປ່າກວ້າງ ຂຽວກະຈີໄດ້ດັ່ງເດີມ* ***ທ່ານເອີຍ!***

✳ ***ວັນ****ທີ 30 ພຶດສະພາຜ່ານມາ ມີຂ່າວວ່າ ການຖອນລົດປະຈຳຕຳແໜ່ງຈຳນວນ* ***10 ຄັນ*** *ຈາກການນຳລະດັບສູງ ເພື່ອຈັດສັນສັບຊ້ອນໃຫ້ດຸ່ນດ່ຽງ ເປັນການຈັດຕັ້ງປະຕິບັດ* ***ດຳລັດເລກທີ 599/ລບ*** *ແລະ ນິຕິກຳທີ່ກ່ຽວຂ້ອງ ກາຍເປັນກະແສຟອງໃຫ້ສັງຄົມໄດ້ຊື່ນຊົມອີກຄັ້ງ ພາຍຫລັງເຜີຍແຜ່ໃຫ້ບັນດາກະຊວງ, ຂະແໜງການ ແລະ ແຂວງຕ່າງໆ ເພື່ອຍົກສູງການຄຸ້ມຄອງລາຍຈ່າຍ-ງົບປະມານຂອງລັດດ້ວຍມາດຕະການປະຢັດມັດທະຍັດ, ຕ້ານການຟຸມເຟືອຍ ແລະ ຈຳກັດລາຍຈ່າຍງົບປະມານໂດຍການຄຸ້ມຄອງລົດລັດ ແລະ ນຳໃຊ້ໃຫ້ຖືກເປົ້າໝາຍ ຫລາຍພາກສ່ວນຍົກຍ້ອງ ແຜນຍຸທະສາດ ຊໍ່ໃຫ້ຈິງຈັງເຮັດ ສືບສານເລື່ອງເລື້ອຍ ວັນໃດພໍປະຢັດໄດ້ ຊໍ່ຊົມເຊີຍຢ່າງຍິ່ງ ເຮົາທຸກຄົນຊ່ວຍຊອ້ານ ເມືອງບ້ານຈຶ່ງຈະເລີນ* ***ທ່ານເອີຍ!***

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: ແມ່ແອ**

ແມ່ແອເອີ້ນໃສ່ລູກວ່າ: ອີຫລ້າເອີຍ ອັດຕູແດ່ ທາງນອກມັນໜາວ - ຊິອັດ ເຮັດຫຍັງ ເຖິງຊິອັດປະຕູທາງນອກກະໜາວຄືເກົ່າ ທັ້ນລະນະ! ອີອັນນີ້ !!!



## ຄະຕິເຕືອນໃຈ

# ດອກຂະຍອມ

ວັນລ່າ ຍຸງຍາງໄມ້ ລົມຕີຍັງທັກຄ່ອງ
ບາດລ່າ ປ່າຫຍ້າປ້ອງ ລົມຕ້ອງກໍບໍ່ເຟືອນ

# ພົບວັດຖຸຕ້ອງສົງໄສ ໃກ້ກັບອາຄານລັດຖະສະພາອັງກິດ

ແປ ແລະ ຮຽບຮຽງ: ນາງ ປາກາລັກ ພົມມີໄຊ

*ເຈົ້າໜ້າທີ່ຕຳຫລວດອັງກິດໄດ້ກວດສອບວັດສະດຸທີ່ຕ້ອງສົງໄສຢູ່ໃກ້ກັບອາຄານລັດຖະສະພາ ແຕ່ບໍ່ແມ່ນວັດຖຸອັນຕະລາຍ.*

ອີງຕາມການລາຍງານຂ່າວເມື່ອວັນທີ 7 ມິຖຸນາຜ່ານມາ ໃຫ້ຮູ້ວ່າ: ເຈົ້າໜ້າທີ່ຕຳຫລວດຂອງອັງກິດໄດ້ຖະແຫລງການວ່າ ມີຜູ້ພົບເຫັນພັດສະດຸທີ່ຕ້ອງສົງໄສວ່າຈະເປັນວັດຖຸອັນຕະລາຍ ຢູ່ໃກ້ກັບອາຄານລັດຖະສະພາຂອງອັງກິດ ນະຄອນຫລວງລອນດອນ ເຊິ່ງເຈົ້າໜ້າທີ່ຕຳຫລວດໄດ້ມີການປິດກັ້ນຖະໜົນ ແລະ ບໍລິເວນດັ່ງກ່າວ ເພື່ອກວດສອບວັດສະດຸດັ່ງກ່າວຢ່າງລະອຽດ ຈົນໃນເວລາຕໍ່ມາ ພາຍຫລັງເຈົ້າໜ້າທີ່ໄດ້ມີການກວດກາຢ່າງລະອຽດແລ້ວ ວ່າວັດສະດຸທີ່ພົບເຫັນບໍ່ແມ່ນວັດຖຸອັນຕະລາຍ ຈຶ່ງໄດ້ມີການເປີດເສັ້ນທາງທີ່ໄດ້ປິດກັ້ນກ່ອນໜ້ານັ້ນ ໃຫ້ສາມາດນຳໃຊ້ໄດ້ຕາມປົກກະຕິ.

**ແຫລ່ງຂ່າວ: RYT9**










# ກາຊັກສະຖານຈະລົງປະຊາມະຕິ ລັດຖະທຳມະນູນສະບັບໃໝ່

ແປ ແລະ ຮຽບຮຽງ: ນາກ ເມືອງມະໄນ



ເມື່ອອາທິດຜ່ານມາ ໄດ້ມີການລາຍງານຂ່າວໃຫ້ຮູ້ວ່າ: ປະເທດກາຊັກສະຖານ ໄດ້ມີການລົງປະຊາມະຕິກ່ຽວກັບຮ່າງລັດຖະທຳມະນູນ ຫລັງຈາກເກີດເຫດຄວາມບໍ່ສະຫງົບໃນເດືອນມັງກອນຜ່ານມາ ເຮັດໃຫ້ມີຜູ້ເສຍຊີວິດຫລາຍກວ່າ 230 ຄົນ.

ຫລັງຈາກເກີດເຫດຄວາມຮຸນແຮງ, ທ່ານ ຄາສຊິມ ໂຈມາດ ໂຕກາເຢບ ປະທານາທິບໍດີຂອງກາຊັກສະຖານ ໄດ້ຊຸກຍູ້ "ການສ້າງກາຊັກສະຖານໃໝ່" ດ້ວຍການແກ້ໄຂລັດຖະທຳມະນູນ ແລ້ວເປີດໃຫ້ປະຊາຊົນລົງຄະແນນສຽງ.

ທ່ານ ຄາສຊິມ ໂຈມາດ ໂຕກາເຢບ ໄດ້ກ່າວວ່າ: ລັດຖະທຳມະນູນສະບັບໃໝ່ ໄດ້ຫັນປ່ຽນຈາກການປົກຄອງທີ່ໃຫ້ອຳນາດປະທານາທິບໍດີຢ່າງຫລວງຫລາຍ ມາເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ລັດຖະສະພາ.

ເຖິງຢ່າງໃດກໍຕາມ, ສິ່ງທີ່ຫລາຍພາກສ່ວນໃຫ້ຄວາມສົນໃຈຫລາຍທີ່ສຸດໃນລັດຖະທຳມະນູນສະບັບປັບປຸງນີ້ ແມ່ນຕັດສິດທິພິເສດຂອງທ່ານ ຊາບາເຢບ ອະດີດປະທານາທິບໍດີລົງ ເນື່ອງຈາກເຖິງແມ່ນວ່າທ່ານ ຊາບາເຢບ ຈະລາອອກຈາກຕຳແໜ່ງປະທານາທິບໍດີກາຊັກສະຖານແລ້ວ ແຕ່ທ່ານຍັງຄົງຮັກສາສະຖານະພາບ "ຜູ້ນຳແຫ່ງຊາດ" ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ເຮັດໃຫ້ທ່ານມີອິດທິພົນຕໍ່ການສ້າງນະໂຍບາຍຕ່າງໆຂອງປະເທດ ໂດຍໃນລັດຖະທຳມະນູນສະບັບໃໝ່ ບໍ່ໄດ້ກຳນົດສະຖານະພາບດັ່ງກ່າວອີກ ພ້ອມທັງປ້ອງກັນເຄືອຍາດພີ່ນ້ອງຂອງປະທານາທິບໍດີທີ່ມີຕຳແໜ່ງຢູ່ໃນລັດຖະບານ.

**ແຫລ່ງຂ່າວ: APF**

# ປະຢັດ

# ໂດຍ: ດົ້ນກົບເມກ

ຜູ້ຂຽນເຂົ້າໃຈວ່າການປະຢັດຊັບ (ເງິນ) ຄືການຮູ້ຈັກໃຊ້ຈ່າຍຊື້ສິ່ງຂອງທີ່ຈຳເປັນ ແລະ ເໝາະສົມແກ່ການດຳເນີນຊີວິດ ຫລືສາມາດເວົ້າໄດ້ວ່າ ໃຊ້ຈ່າຍຕາມກຳລັງທີ່ຫາໄດ້ ໂດຍຕ້ອງໄດ້ແບ່ງໄວ້ໃຊ້ຍາມສຸກເສີນ ຫລືຍາມຫາບໍ່ໄດ້ ແຕ່ຖ້າວ່າຄົນໃດຫາກໃຊ້ຈ່າຍເກີນກຳລັງ ເຖິງຂັ້ນໄປຢືມເກີນຄວາມຈຳເປັນ ກໍອາດພາໃຫ້ເກີນຄວາມສາມາດທີ່ຈະຫາມາຈ່າຍຄືນເຂົາ.

ການຮູ້ຈັກໃຊ້ຈ່າຍຢ່າງປະຢັດນັ້ນ ຄື: ຫລັກການຄ້ຳປະກັນຄວາມສຸກຂອງຜູ້ປະຢັດຊັບ ເພາະສະພາບການປ່ຽນແປງທາງເສດຖະກິດເຮັດໃຫ້ຫລາຍອາຊີບ ຕົກວຽກ ຂາດລາຍໄດ້ ຖ້າວ່າບໍ່ມີເງິນປະຢັດສຳຮອງ ຫລືບໍ່ມີທີ່ດິນປູກຝັງລ້ຽງຊີບ ກໍຍິ່ງສ້າງບັນຫາຫລາຍເທົ່າທະວີຄູນ ດັ່ງນັ້ນການປະຢັດ ຍັງໝາຍເຖິງວ່າເຮົາຕ້ອງຕັດຄວາມຢາກໄດ້ (ຕັນຫາ) ຫລືຄວາມໂລບທີ່ເປັນສ່ວນເກີນອອກໃຫ້ໄດ້ ເພາະຖ້າວ່າຄົນໃດກໍຕາມ ໃຊ້ຊີວິດແລ່ນຕາມຄວາມຢາກ ຫລືຕາມກະແສສັງຄົມທີ່ເຫໍ່ວັດຖຸລາຄາແພງ ກໍຈະພາໃຫ້ຊີວິດພົບກັບບັນຫາການເງິນທັນທີ. ບາງກໍລະນີ ເມື່ອບັນຫາເກີດຂຶ້ນຫລາຍທາງຈົນບໍ່ສາມາດແກ້ໄຂໄດ້ ເຖິງຂັ້ນອອກການກໍມີ ການປະຢັດຈຶ່ງ ຕ້ອງຮູ້ຈັກຄິດໄລ່ປຽບທຽບຊົ່ງຊາ ເບິ່ງກຳລັງຊັບ ແລະ ກຳລັງລາຍໄດ້ຂອງຕົນ.

ຄົນທີ່ຮູ້ຈັກປະຢັດຊັບສິນຄືຄົນທີ່ສະຫລາດເຂົາຄິດເຫັນການປ້ອງກັນບັນຫາຈະເກີດຂຶ້ນໃນອະນາຄົດ ແຕ່ຖ້າມີຄົນຄິດແຕ່ຈະເສບສຸກໃຊ້ຈ່າຍ ໂດຍບໍ່ຄຳນຶງເຖິງຜົນເສຍຕາມມາໃນວັນຂ້າງໜ້າຖືໄດ້ວ່າປະໝາດຂາດສະຕິ.

ຄວາມປະຢັດຍັງຕ້ອງໄປຄູ່ກັບຄວາມຂະຫຍັນໝັ່ນພຽນສ້າງລາຍໄດ້. ບໍ່ປະໝາດຂີ້ຄ້ານມັກງ່າຍຄິດຝັນເອົາແຕ່ຄວາມສະບາຍ; ໃນທາງພຸດທະສາສະໜາ, ພະພຸດທະເຈົ້າສອນວ່າ: ຊັບສິນບັດເກີດແກ່ຜູ້ຂະຫຍັນ!



# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 42 ການກວດກາເຕັກນິກຍານພາຫະນະທາງບົກ**

ການກວດກາເຕັກນິກຍານພາຫະນະທາງບົກ ໃຫ້ກວດກາລາຍການຕົ້ນຕໍ ດັ່ງນີ້:

1. ໂຄງສ້າງ, ຂະໜາດ ແລະ ນ້ຳໜັກ;
2. ລະບົບບັງຄັບລ້ຽວ;
3. ລະບົບ ຫ້າມລໍ້ລົດ, ຄວາມທ່ຽງສູນລໍ້, ຄວາມໄວ;
4. ລະບົບຂັບເຄື່ອນ (ຢາງ ແລະ ລໍ້);
5. ລະບົບເຄື່ອງຈັກ;
6. ທາດອາຍຄາບອນໂມນ໋ອກໄຊ໌ (CO), ໄຮໂດຣຄາບອນ (HC), ສຽງຈາກທໍ່ອາຍເສຍ;
7. ລະບົບ ໄຟຫ້າມລໍ້, ໄຟລີ່, ໄຟຕາ, ແກລົດ, ໄຟເສີມ, ເຄື່ອງສຽງ;
8. ລະບົບກວດກາຄວາມປອດໄພ ແວ່ນຂ້າງ ຊ້າຍ, ຂວາ ແລະ ຫຼັງ, ສາຍຮັດນິລະໄພ.

ສຳລັບ ລາຍລະອຽດກ່ຽວກັບມາດຕະຖານເຕັກນິກ, ຂັ້ນຕອນ ແລະ ວິທີການກວດກາເຕັກນິກຍານ ພາຫະນະທາງບົກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 ການຮຽກຄືນຍານພາຫະນະທີ່ບໍ່ໄດ້ມາດຕະຖານ**

ຍານພາຫະນະທີ່ເກີດຂໍ້ບົກພ່ອງທາງດ້ານມາດຕະຖານເຕັກນິກ ໃນລະບົບໃດໜຶ່ງຈາກການນຳໃຊ້ ທີ່ຜ່ານການກວດກາ, ພິສູດ ແລະ ມີຫຼັກຖານຢັ້ງຢືນຈາກວິສະວະກອນແລ້ວ ຜູ້ຜະລິດຕ້ອງຮຽກຄືນ ຈຳນວນຍານພາຫະນະທີ່ຢູ່ໃນສາຍການຜະລິດຂອງຮຸ່ນທີ່ເກີດຂໍ້ບົກພ່ອງນັ້ນ ໂດຍຜ່ານຕົວແທນຈຳໜ່າຍຂອງຕົນ ພ້ອມທັງມີຄວາມຮັບຜິດຊອບໃນການສ້ອມແປງ, ປ່ຽນຖ່າຍ, ປ່ຽນແທນໃຫ້ແກ່ເຈົ້າຂອງຍານພາຫະນະ.

**ພາກທີ V**
**ການດັດແປງຮູບຮ່າງ ແລະ ເຕັກນິກ ຍານພາຫະນະທາງບົກ**

**ມາດຕາ 44 ການດັດແປງຮູບຮ່າງ ແລະ ເຕັກນິກ ຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດັດແປງຮູບຮ່າງ ແລະ ເຕັກນິກ ຍານພາຫະນະທາງບົກທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງຍື່ນຄຳຮ້ອງຕາມແບບພິມ ພ້ອມດ້ວຍໃບທະບຽນຍານພາຫະນະ ແລະ ປຶ້ມຕິດຕາມການຂຶ້ນທະບຽນ ຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ພາຍໃນເວລາ ຫ້າວັນ ລັດຖະການ.

ພາຍຫຼັງໄດ້ຮັບອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງແລ້ວ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ນຳເອົາລົດໄປດັດແປງຮູບຮ່າງ ຫຼື ເຕັກນິກຢູ່ອູ່ສ້ອມແປງທີ່ໄດ້ມາດຕະຖານ ຫຼື ສະຖານທີ່ໄດ້ຮັບອະນຸຍາດ;
2. ນຳລົດມາກວດກາຄືນ ພາຍຫຼັງມີການດັດແປງຮູບຮ່າງ ຫຼື ເຕັກນິກສຳເລັດແລ້ວ;
3. ນຳລົດໄປຂຶ້ນທະບຽນໃໝ່.

**ມາດຕາ 45 ການດັດແປງເພື່ອຟື້ນຟູສະພາບຂອງຍານພາຫະນະທາງບົກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຟື້ນຟູຍານພາຫະນະທາງບົກ ເກົ່າແກ່, ບູຮານ ຫຼື ເປ່ເພເສຍຫາຍ ຊຶ່ງຕ້ອງໄດ້ປ່ຽນ ໜ່ວຍຈັກ ແລະ/ຫຼື ຖັງລົດຕ້ອງຍື່ນຄຳຮ້ອງຕາມແບບພິມພ້ອມດ້ວຍໃບທະບຽນຍານພາຫະນະ ຫຼື ໃບຢັ້ງຢືນຈາກອົງການປົກຄອງບ້ານ ຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ພາຍໃນເວລາ ຫ້າວັນ ລັດຖະການ.

ພາຍຫຼັງໄດ້ຮັບອະນຸຍາດແລ້ວ ໃນກໍລະນີຍານພາຫະນະທາງບົກນັ້ນ ຫາກບໍ່ມີ ເລກຈັກ ຫຼື ເລກຖັງ ຫຼື ມີຕົວເລກບໍ່ຈະແຈ້ງ ຕ້ອງໄດ້ສັບ ເລກຈັກ ຫຼື ເລກຖັງໃໝ່ ແລ້ວນຳໄປຂຶ້ນທະບຽນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ຍານພາຫະນະທາງບົກ ທີ່ບໍ່ສາມາດສ້ອມແປງ ແລະ ຟື້ນຟູໄດ້ ຕ້ອງຖອນທະບຽນ.

**ພາກທີ VI**
**ການ ຊື້ ຂາຍ, ມອບ, ຢຸດນຳໃຊ້ ແລະ ການສູນຫາຍ**
**ໝວດທີ 1**
**ການ ຊື້ ຂາຍ ແລະ ມອບ ຍານພາຫະນະທາງບົກ**

**ມາດຕາ 46 ເອກະສານປະກອບການ ຊື້ ຂາຍ ຍານພາຫະນະທາງບົກ**

ການ ຊື້ ຂາຍ ຍານພາຫະນະທາງບົກທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຢັ້ງຢືນການ ຊື້ ຂາຍ;
2. ໃບຢັ້ງຢືນທີ່ຢູ່, ສຳເນົາຖ່າຍ ສຳມະໂນຄົວ ຫຼື ບັດປະຈຳຕົວຂອງ ຜູ້ຊື້ ແລະ ຜູ້ຂາຍ;
3. ໃບຮັບປະກັນຂອງຜູ້ຂາຍ ໂດຍຢັ້ງຢືນ ຈາກອົງການປົກຄອງບ້ານ;
4. ໃບທະບຽນຍານພາຫະນະທາງບົກສະບັບຕົ້ນ;
5. ປຶ້ມຕິດຕາມການຂຶ້ນທະບຽນຍານພາຫະນະທາງບົກ.

**ມາດຕາ 47 ເອກະສານປະກອບການມອບຍານພາຫະນະທາງບົກ**

ການມອບຍານພາຫະນະທາງບົກ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບມອບກຳມະສິດທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ;
2. ໃບຢັ້ງຢືນທີ່ຢູ່, ສຳເນົາຖ່າຍ ສຳມະໂນຄົວ ຫຼື ບັດປະຈຳຕົວ ຂອງຜູ້ມອບ ແລະ ຜູ້ຮັບ;
3. ໃບຮັບປະກັນຂອງຜູ້ມອບ ໂດຍຢັ້ງຢືນຈາກອົງການປົກຄອງບ້ານ;
4. ໃບທະບຽນຍານພາຫະນະທາງບົກສະບັບຕົ້ນ;
5. ປຶ້ມຕິດຕາມການຂຶ້ນທະບຽນຍານພາຫະນະທາງບົກ.

**ມາດຕາ 48 ການຈົດທະບຽນໂອນກຳມະສິດ**

ການຊື້ ຂາຍ ແລະ ການມອບຍານພາຫະນະນັ້ນ ຕ້ອງໄດ້ຈົດທະບຽນໂອນກຳມະສິດຢູ່ ກອງທະບຽນຍານພາຫະນະທາງບົກທີ່ກ່ຽວຂ້ອງ ພາຍໃນເວລາ

ອ່ານຕໍ່ສະບັບໜ້າ...




**ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

9. ຜູ້ຖືກຮ້ອງຟ້ອງ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຖືກຜູ້ອື່ນຮ້ອງຟ້ອງຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ ຫລື ສານປະຊາຊົນວ່າເປັນຜູ້ລະເມີດກົດໝາຍ;

10. ຜູ້ຮ້ອງຂໍຄວາມເປັນທຳ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຍື່ນຄຳຮ້ອງຂໍຄວາມເປັນທຳຂອງຕົນຕໍ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຫລື ຄະນະປະຈຳສະພາແຫ່ງຊາດ;







**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ